# ອົງການຈັດຕັ້ງມະຫາຊົນ ຮາກຖານ ສາຂາ ທຫລ ພາກກາງ ຈັດຕັ້ງເຜີຍແຜ່ພາລະບົດບາດຂອງ ທະນາຄານແຫ່ງ ສປປ ລາວ ໃຫ້ແກ່ສາຂາທະນາຄານທຸລະກິດລັດ ພາຍໃນແຂວງສະຫວັນນະເຂດ

ໃນຕອນເຊົ້າຂອງວັນທີ 27 ກຸມພາ 2018 ເວລາ 08:30 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 4 ສາຂາ ທຫລ.ສຂທີ່ຜ່ານມາ, ໄດ້ມີການຈັດກອງປະຊຸມເຜີຍແຜ່ພາລະບົດບາດທະນາຄານແຫ່ງ ສປປ ລາວຂຶ້ນ, ເຊິ່ງໃຫ້ກຽດເປັນປະທານຂອງທ່ານ ບຸນວົງ ດວງດອກເກດ ເລຂາໜ່ວຍພັກ ຫົວໜ້າສາຂາ ທຫລ.ສຂ, ບັນດາທ່ານຜູ້ຕາງໜ້າຈາກພະແນກພາຍໃນໆສາຂາ ທຫລ.ສຂ, ບັນດາຜູ້ຕາງໜ້າຈາກສາຂາທະນາຄານທຸລະກິດລັດ, ລັດຫຸ້ນສ່ວນ, ເອກະຊົນ ແລະ ສາຂາຕ່າງປະເທດ ໂດຍມີຜູ້ເຂົ້າຮ່ວມທັງໝົດ 40 ທ່ານ ຍິງ 17 ທ່ານ.



ໃນກອງປະຊຸມຍັງໄດ້ຮັບກຽດຢ່າງສູງຈາກທ່ານປະທານຂຶ້ນກ່າວຈຸດປະສົງໃນການຈັດກອງປະຊຸມເຜີຍແຜ່ໃນຄັ້ງນີ້: ກໍ່ເພື່ອເຜີຍແຜ່ພາລະບົດບາດຂອງ ທຫລ ກໍ່ຄື ສາຂາ ທຫລ.ສຂ, ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສັງເກດທະນະບັດປອມ (ເງິນກີບ) ໃຫ້ແກ່ຜູ້ເຂົ້າຮ່ວມທັງໝົດ ໄດ້ຮັບຮູ້ ແລະ ເຂົ້າໃຈ, ພ້ອມທັງເປັນການແລກປ່ຽນບົດຮຽນໃນການຈັດຕັ້ງປະຕິບັດວຽກງານວິຊາສະເພາະທີ່ຕິດພັນກັບຫົວຂໍ້ທີ່ໄດ້ເຜີຍແຜ່ເພື່ອເປັນບ່ອນອີງໃນການ ຈັດຕັ້ງປະຕິບັດວຽກງານຕົວຈິງໃຫ້ມີປະສິດທິຜົນ ແລະ ຄວາມເອກະພາບໃນຕໍ່ໜ້າ.



ຕະຫຼອດໄລຍະຂອງການດຳເນີນວາລະກອງປະຊຸມເຜີຍແຜ່, ຜູ້ເຂົ້າຮ່ວມທຸກທ່ານ ໄດ້ໃຫ້ຄວາມສົນໃຈຮັບຟັງ ເນື້ອໃນບັນດາຫົວຂໍ້ຂອງການນຳສະເໜີ ກໍ່ຄືການເຜີຍແຜ່ດ້ວຍຄວາມເອົາໃຈໃສ່ຢ່າງຈິດຈໍ່ ເຊິ່ງສະແດງອອກໄດ້ມີຄຳຖາມເຈາະຈີ້ມ ເພື່ອແລກປ່ຽນຄວາມຄິດເຫັນຮ່ວມກັນ ດ້ວຍບັນຍາກາດຟົດຟື້ນ.

ໃນຕອນທ້າຍ ປະທານກອງປະຊຸມຍັງໄດ້ມີຄຳເຫັນໂອ້ລົມ ແລະ ກ່າວຂອບໃຈຕໍ່ບັນດາທ່ານທຸກພາກສ່ວນຜູ້ທີ່ມີສ່ວນຮ່ວມທີ່ໄດ້ເສຍສະຫຼະເວລາ ແລະ ສະຕິປັນຍາ ຈົນເຮັດໃຫ້ກອງປະຊຸມດັ່ງກ່າວຈັດຂຶ້ນ ແລະ ດຳເນີນໄປດ້ວຍຜົນສຳເລັດຕາມວັດຖຸປະສົງທີ່ວາງໄວ້.

ແລະທ່ານຍັງໄດ້ເນັ້ນໜັກ ໃຫ້ບັນດາທ່ານທີ່ເຂົ້າຮ່ວມຮັບຟັງໃນຄັ້ງນີ້ ຊ່ວຍກັນນຳເອົາຂໍ້ມູນຕ່າງໆໄປເຜີຍແຜ່ໃຫ້ກັບຜູ້ທີ່ບໍ່ໄດ້ເຂົ້າຮ່ວມ ກໍ່ຄືພໍ່ແມ່ປະຊາຊົນ ໃນເວລາທີ່ລົງເຄື່ອນໄຫວວຽກງານຢູ່ທ້ອງຖິ່ນ ເພື່ອໃຫ້ທຸກຄົນເພີ່ມສະຕິລະວັງຕົວ ແລະ ເປັນເຈົ້າການ ໃນການແຈ້ງໃຫ້ບັນດາພາກສ່ວນລັດທີ່ກ່ຽວຂ້ອງຮັບຊາບ ຕໍ່ບັນດາວິສາຫະກິດທີ່ເຄື່ອນໄຫວລະດົມທຶນທີ່ບໍ່ຖືກຕ້ອງ ເພື່ອໃຫ້ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ແລະ ສະຫງົບສຸກ.

**ຂ່າວ-ພາບ: ເດດອາລຸນ ແສນທະວົງ**